# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 10 ພຶສພາ 2020 (05-10-2020)

---

### ໃຫ້ອະພັຍ

| |
|---|
| *ເມື່ອໃດຄືຄັ້ງສຸດທ້າຍທີ່ທ່ານໄດ້ເສັຽເງິນຫຼາຍຍ້ອນການແປງບາງຢ່າງ?* |

**ຈຸດສຳຄັນໃນບົດຮຽນ**: ຄວາມສັມພັນຈະເຕີບໃຫຍ່ເລີກກວ່າເກົ່າດ້ວຍການໃຫ້ອະພັຍ.
**ພຣະຄັມພີຕອບສນອງຕໍ່ຊີວິດ.** ບາງຄັ້ງພວກເຮົາຈ່າຍແພງກໍດີກວ່າ.

- ເຄີຍຊື້ ນ້ຳມັນເບີຖົ່ວດິນຍີ່ຫໍ້ທົ່ວໄປບໍ່? ພຽງແຕ່ທ່ານພົບວ່າຕ້ອງຈ່າຍແພງກ່ວາເພື່ອໃຫ້ໄດ້ສິ່ງທີ່ມີຣົດຊາດຄືກັນກັບນ້ຳມັນເບີຖົ່ວດິນຢ່າງແທ້ຈິງ.
- ເຄີຍຊື້ເຄື່ອງໃຊ້ໄຟຟ້າໃນເຮືອນຄົວຣາຄາຖືກບໍ່? ຊຶ່ງປີໜ້າຕ້ອງໄດ້ປ່ຽນ ຍ້ອນຣາຄາຖືກສົມກັບຄຸນນະພາບຕໍ່າ.
- ເຄີຍພຍາຍາມປະຍັດເງິນດ້ວຍການເຊົ່າໂຮງແຮມຣາຄາບໍ່ແພງບໍ່? ພຽງແຕ່ພົບວ່າຜູ້ຈັດການຫຼຸດຣາຄາລົງໂດຍບໍ່ຢາກຈ່າຍຄ່າການຂ້າແມງໄມ້(ພະຍາດ).

ຫຼາຍສິ່ງຢ່າງມີຣາຄາສູງ, ແຕ່ກໍຄຸ້ມຄ່າ. ຂ້າພຣະເຈົ້າຢາກຈະເອີ້ນການໃຫ້ອະພັຍວ່າເປັນຂອງ"ຣາຄາສູງ." ເຖິງແມ່ນວ່າຈະຕ້ອງໄດ້ທຸ້ມເທກໍຕາມ, ແຕ່ ການໃຫ້ອະພັຍເປັນການລົງທຶນທີ່ດີທີ່ສຸດໃນຄວາມສັມພັນທຸກປະເພດ. ການໃຫ້ອະພັຍແມ່ນປັດຈັຍສຳຄັນຕໍ່ສຸຂພາບການແຕ່ງງານ, ສຸຂພາບຄອບຄົວ, ແລະສຸຂພາບຂອງໂບດ. ຄວາມສັມພັນຈະເຕີບໃຫຍ່ຫາກເຮົາປ່ອຍວາງຄວາມເຈັບປວດ, ບາດແຜ, ແລະ ຄວາມບາດໝາງຕ່າງໆ. ຂນະທີ່ທ່ານພິຈາຣະນາການບັນລະຍາຍຂອງພຣະເຢຊູ ເຣື່ອງຂ້າໃຊ້ທີ່ບໍ່ຍອມໃຫ້ອະພັຍ, ປ່ອຍໃຫ້ພຣະທັມພຣະເຈົ້າແລ່ນຜ່ານທ່ານ, ຊຳຣະສິ່ງທີ່ທ່ານໃຫ້ອະພັຍບໍ່ໄດ້ໃຫ້ຫຼຸດຫາຍໄປ.
**ພຣະຄັມພີກ່າວວ່າແນວໃດ** : ( ເບິ່ງຕາມຂໍ້ 1, 2, ແລະ 3 )

### ການສຶກສາພຣະຄັມພີ

**1. <u>ປະຖົມການ 18:21-22</u>.**

*[21] ເມື່ອນັ້ນເປໂຕໄດ້ມາທູນຖາມພຣະອົງວ່າ,"ນາຍເອີຍ, ຖ້າພີ່ນ້ອງຂອງຂ້ານ້ອຍເຮັດຜິດຕໍ່ຂ້ານ້ອຍຫຼາຍເທື່ອ ຂ້ານ້ອຍຕ້ອງຍົກຜິດໃຫ້ເພິ່ນເຖິງຈັກເທື່ອ ເຖິງເຈັດເທື່ອຫຼື? [22] ພຣະເຢຊູຊົງຕອບວ່າ, ເຮົາບໍ່ໄດ້ບອກພຽງເຈັດເທື່ອເທົ່ານັ້ນແຕ່ເຖິງເຈັດສິບເທື່ອຄູນກັບເຈັດ.*

ພວກເຮົາຈະເບິ່ງຄຳອຸປມາທີ່ພຣະເຢຊູໄດ້ກ່າວເຣື່ອງການໃຫ້ອະພັຍ, ແຕ່ພຣະອົງກ່າວຄຳອຸປມາເພື່ອຕອບຄຳຖາມຄວາມຢາກຮູ້ຢາກເຫັນທີ່ທ່ານເປໂຕໄດ້ຖາມ. ຂນະທີ່ເປໂຕເປັນຜູ້ນຳໃນພວກອັຄສາວົກສິບສອງຄົນເພິ່ນມັກເວົ້າເພື່ອກຸ່ມ. ອັຄສາວົກທັງໝົດອາດແປກໃຈຕໍ່ຄຳຖາມນີ້, ແຕ່ພວກເຮົາຮູ້ແລ້ວວ່າເປໂຕທີ່ເປັນຜູ້ຖາມວ່າມີຂໍ້ກຳນົດຕາມທຳນຽມບໍ່? ມີຈັກເທື່ອທີ່ພວກເຮົາຖືກບັ່ງບອກໃຫ້ອະນຸຍາດແກ່ຄົນຜູ້ເກົ່າຫວິດຈາກຜົນການກະທຳ? ແມ່ນຄຳຖາມທີ່ມີເຫດຜົນ.

ທ່ານເປໂຕຍັງສືບຕໍ່ເດົາຄຳຕອບຕໍ່ຄຳຖາມຂອງຕົນເອງ. ທ່ານເຕີມເລກເຈັດໃສ່ບ່ອນຍະຫວ່າງ, ຊຶ່ງເປັນຕົວເລກ

ຂອງຄວາມສົມບູນ. ພວກອາຈານໃນສມັຍນັ້ນໄດ້ທ້າທາຍຝຸງຊົນໃຫ້ຍົກໂທດສາມເທື່ອ. ຖ້າຜິດພາດສາມເທື່ອແລ້ວກໍໝົດສິດ. ສ່ວນແນວຄິດຂອງທ່ານເປໂຕ, ຄິດວ່າເພິ່ນເປັນຄົນໃຈກ້ວາງພໍ. ການໃຫ້ອະພັຍຄົນໃດຄົນນຶ່ງເຖິງເຈັດເທື່ອກໍກາຍສອງຕໍ່ກໍານົດທີ່ທໍານຽມຄາດຫວັງແລ້ວ. ທ່ານເປໂຕ ຂຶ້ນໃຫ້ລ່ວງໜ້າເກີນກໍານົດຕາມທໍານຽມ, ຕັ້ງສອງເທົ່າທີ່ພວກນັກທັມໄດ້ບັນຍັດໄວ້ ແລະທັງໄດ້ຍົກລະດັບກົດບັນຍັດຂຶ້ນຕື່ມຂັ້ນນຶ່ງ.

| |
|---|
| ***ຈະມີຫຍັງເກີດຂຶ້ນເມື່ອເຮົາໃຫ້ອະພັຍຜູ້ໃດຜູ້ນຶ່ງ?*** |

ທ່ານເປໂຕອາດຮູ້ສຶກປື້ມໃຈຕົນເອງໃນຂນະນີ້, ບາງທີອາດຮູ້ສຶກດີຄືກັນກັບເຮົາໄດ້ໃຫ້ທິບຄົນເສີບ $50 ສໍາລັບຄາບເຂົ້າແລງພຽງ $20. ໃນໂອກາດແປກໆທີ່ໄດ້ສະແດງຄວາມໃຈໃຫຍ່ແບບນີ້, ພວກເຮົາມັກລູບຫຼັງຕົວເອງຄ່ອຍໆ. ພຣະເຢຊູເຮັດໃຫ້ເປໂຕຕົກຕະລຶງກັບຄໍາຕອບຂອງພຣະອົງ: *"ເຮົາບໍ່ໄດ້ບອກພຽງເຈັດເທື່ອເທົ່ານັ້ນແຕ່ເຖິງເຈັດສິບເທື່ອຄູນກັບເຈັດ."* ພຣະເຢຊູຢາກບອກວ່າການໃຫ້ອະພັຍຄົນອື່ນບໍ່ຄວນມີຂອບເຂດຈໍາກັດ. ມີໜ້ອຍຄົນທີ່ຈະຍົກໂທດ 50, 60, ຫຼື70ເທື່ອໃຫ້ຄົນຜູ້ເກົ່າໃນຊ່ວງເວລາອັນສັ້ນ. ອົງພຣະຜູ້ເປັນເຈົ້າເວົ້າເກີນຄວາມຈິງກໍເພື່ອຈັດສາກຕລົກຂົບຂັນດຶງຄວາມສົນໃຈພວກອັຄສາວົກ. ແທ້ຈິງແລ້ວພຣະອົງຢາກເວົ້າວ່າ: ຈົ່ງໃຫ້ອະພັຍເລື້ອຍໄປ.

ຄໍຣີ ເທັນ ບູມ (Corrie ten Boom)ໄດ້ຜ່ານຜ່າຄວາມຝັນຮ້າຍມາໂດຍຕລອດທີ່ຄ້າຍຄຸມຂັງນາຊີ. ນາງເປັນຄົນດຽວເທົ່ານັ້ນໃນຄອບຄົວທີ່ລອດຕາຍມາໄດ້. ໃນຊຸມນາຣີກແຫ່ງນັ້ນ, ນາງອັບອາຍຂາຍໜ້າ, ໂດຍສະເພາະເວລາຜູ້ຍິງອາບນໍ້າພວກຄົນຍາມບ້າຕັນຫາມັກມາຊ້ອງເບິ່ງ. ໂດຍພຣະຄຸນພຣະເຈົ້າ, ຄໍຣີຜ່ານຜ່າມັນມາໄດ້ຕລອດ ແລະກໍນຶກໃນໃຈວ່າຈະໃຫ້ອະພັຍ-ຫຼືນາງເຄີຍຄິດຢ່າງນັ້ນແທ້. ຄໍຣີໄດ້ທ່ອງທ່ຽວໄປຫຼາຍໆບ່ອນເພື່ອເລົ່າຄໍາພະຍານການໃຫ້ອະພັຍຂອງພຣະເຈົ້າ. ວັນທີດນຶ່ງ ຢູ່ໂບດແຫ່ງນຶ່ງໃນເມືອງມິວນິສ(Munich), ມີຊາຍຜູ້ນຶ່ງຍັບມາໃກ້ນາງພ້ອມທັງເດ່ມືຂຶ້ນ. "ບົດເທດຈັ່ງແມ່ນຄັກ, ຟຣໍເລນ(Fraulein)! ຈັ່ງແມ່ນດີແທ້ໆ, ຂນະທີ່ເຈົ້າກ່າວ, ຄວາມບາບຂອງພວກເຮົາກໍຈົມຫາຍໄປໃນພື້ນທະເລໝົດສັ້ງງ! ...ຂ້ອຍຊາບດີວ່າ ພຣະເຈົ້າໄດ້ໃຫ້ອະພັຍຄວາມໂຫດຮ້າຍທີ່ຂ້ອຍໄດ້ກະທໍາທີ່ນັ້ນ, ແຕ່ຂ້ອຍຢາກໄດ້ຍິນຈາກປາກຂອງເຈົ້ານໍາ. ຟຣໍເລນ...ເຈົ້າອະພັຍໃຫ້ຂ້ອຍໄດ້ບໍ່?"

ນາງນຶກໃບໜ້ານີ້ຂຶ້ນມາໄດ້ທັນທີ. ນີ້ໃບໜ້າຄົນບ້າຕັນຫາ, ໃບໜ້າເຍີ້ຍຫຍັນຂອງຄົນຍາມໂຫດຫ້ຽມທີ່ສຸດໃນຫ້ອງອາບນໍ້າ. ມືຂອງນາງເຢັນແຂງຢູ່ຂ້າງນາງ. ຄວາມເຢັນໄດ້ຄອບງໍາຫົວໃຈນາງ. ລະອາຍຕົນເອງ, ນາງຈຶ່ງອະທິຖານ, "ພຣະເຢຊູ, ໂຜດຊ່ອຍຂ້ານ້ອຍດ້ວຍ!...ຂ້ານ້ອຍຈະຍົກມືຂຶ້ນໄດ້. ຂ້ານ້ອຍຈະຍົກໄດ້ຢ່າງສະບາຍ. ຂໍພຣະອົງໂຜດປະທານຄວາມຮູ້ສຶກແດ່ຖ້ອນ." ຂນະທີ່ນາງອະທິຖານ, ມືຂອງນາງກໍເຊົາເຢັນ." ນໍ້າແຂງແຫ່ງຄວາມກຽດຊັງໄດ້ເປື່ອຍໄປ, ແລະມືຂອງນາງກໍຍື່ນອອກໄປ. "ຂ້ອຍໃຫ້ອະພັຍເຈົ້າ, ອ້າຍ! ໝົດຈິດໝົດໃຈຂ້ອຍ!" ນາງໃຫ້ອະພັຍດັ່ງທີ່ນາງໄດ້ຮັບການໃຫ້ອະພັຍ.

ທ່ານເຄີຍໄດ້ອະທິຖານຢ່າງນັ້ນບໍ່? ທ່ານເຄີຍຂໍໃຫ້ພຣະເຢຊູປະທານຣິດອໍານາດປົດປ່ອຍຜູ້ອື່ນໃຫ້ເປັນອິສຣະດ້ວຍພຣະຄຸນຢ່າງຫຼາຍເຫຼືອລົ້ນບໍ່?

## 2. <u>ມັດທາຍ18:23-27</u> .

*[23]"ເຫດສັນນັ້ນ ຣາຊອານາຈັກສວັນປຽບເໝືອນເຈົ້າກະສັດອົງນຶ່ງ ຊົງປະສົງຢາກຄິດບັນຊີເງິນທີ່ພວກຂ້າໃຊ້ເປັນ*
*ໜີ້. [24]ເມື່ອຊົງຕັ້ງຕົ້ນຄິດບັນຊີຢູ່ນັ້ນ ເຂົາພາຄົນທີ່ເປັນໜີ້ພັນຕາລັນຕົນມາເຝົ້າ.[25]ເມື່ອຜູ້ນັ້ນບໍ່ມີສິ່ງໃດຈະໃຊ້ ທ່ານຈຶ່ງ*
*ສັ່ງໃຫ້ຂາຍຕົວກັບທັງເມັຽແລະລູກ ແລະບັນດາສິ່ງຂອງທີ່ເຂົາມີຢູ່ເອົາມາໃຊ້ໜີ້ເສັຽ. [26]ຄົນໃຊ້ຜູ້ນັ້ນຈຶ່ງຂາບລົງວອນຕໍ່*
*ທ່ານວ່າ, 'ໂອຍທ່ານເອີຍ, ຂໍຊົງໂຜດຜ່ອນຜັນຂ້ານ້ອຍກ່ອນ ແລ້ວຂ້ານ້ອຍຈະຫາໃຊ້ແທນໃຫ້ໝົດ'. [27]ເຈົ້າອົງນັ້ນມີ*

*ພຣະທັຍເມດຕາ ຈຶ່ງປ່ອຍຕົວມັນໄປແລະຍົກໜີ້ໃຫ້ດ້ວຍ."*

ນັກເທດທຸກຄົນຊາບເຖິງພະລັງຂອງການເລົ່າເຣື່ອງ. ການຕັດສິນດ້ວຍເຫດຜົນແລະການໃຫ້ເຫດຜົນສາມາດໂນ້ມນ້າວຈິດໃຈຜູ້ຟັງໄດ້, ແຕ່ບໍ່ມີສິ່ງໃດສາມາດສະກິດໃຈຝູງຊົນໄດ້ດັ່ງນິທານອັນເຕັມດ້ວຍພະລັງຈິນຕະນາການ. ຄົນມັກຈະຄ້ອຍຕາມແລະຟັງການບັນລະຍາຍທີ່ດີ, ແລະພຣະເຢຊູກໍເປັນອາຈານຜູ້ເລົ່າເຣື່ອງ.

ພຣະເຢຊູໄດ້ກ່າວຄຳອຸປມາທີ່ເຮັດໃຫ້ເປໂຕສະດຸ້ງດ້ວຍຄຳວ່າ "ເຈັດສິບຄູນເຈັດເທື່ອ". ນີ້ບໍ່ແມ່ນເຣື່ອງຈິງ, ແຕ່ແມ່ນເຣື່ອງສົມມຸດໃຫ້ເຫັນພາບເຣື່ອງຈິງທີ່ພຣະເຢຊູຢາກສອນ. ຄຳອຸປມາເຣື່ອງຂ້າໃຊ້ທີ່ເປັນໜີ້ອັນໃຫຍ່ຫຼວງ, ລາວເປັນໜີ້ເຈົ້າກະສັດເງິນສົດຈຳນວນມະຫາສານຊຶ່ງລາວບໍ່ສາມາດໃຊ້ຄືນໄດ້. ເມື່ອກະສັດເອີ້ນໃຫ້ເອົາບັນຊີມາເບິ່ງ, ລູກໜີ້ຄົນນັ້ນຈຶ່ງກົ້ມໜ້າລົງດິນ, ອ້ອນວອນຂໍເຈົ້ານາຍຜ່ອນຜັນເວລາຫາເງິນມາໃຊ້ຄືນໃຫ້ຈົນຄົບ. ກະສັດເປັນຄົນສລາດແລະມີປັນຍາສາມາດອ່ານວ່າເຖິງແມ່ນລູກໜີ້ຜູ້ນີ້ຈະໃຕ້ທຽນກົ້ມໜ້າເຮັດວຽກຫາມຮຸ່ງຫາມຄ່ຳ24/7ຕລອດຊີວິດທີ່ເຫຼືອ, ກໍບໍ່ອາດຫາເງິນມາໃຊ້ໜີ້ໃຫ້ຄົບຕາມຈຳນວນໄດ້. ເຈົ້າກະສັດຈະເຮັດແນວໃດ? ດ້ວຍພຣະຄຸນແລະຄວາມເມດຕາຢ່າງເຫຼືອເຊື່ອ, ເຈົ້າກະສັດຈຶ່ງປ່ອຍຕົວມັນໄປແລະຍົກໜີ້ໃຫ້. ທັງໝົດ.

ເຊັ່ນດຽວກັນກັບໜີ້ການກະບົດ ຕໍ່ສູ້ພຣະເຈົ້າຂອງເຮົາມັນໜັກໜາສາຫັດຫຼາຍມັນເຫຼືອບ່າກວ່າແຮງທີ່ເຮົາຈະສາມາດໃຊ້ໜີ້ນັ້ນໄດ້. ແຕ່ ພຣະເຢຊູໄດ້ໃຊ້ໜີ້ໃຫ້ເຮົາ ຈົນໝົດສິ້ນ ແລະພຣະເຈົ້າໄດ້ຍົກໜີ້ໃຫ້ເຮົາ. ພວກເຮົາບໍ່ສົມຄວນໄດ້ຮັບການໃຫ້ໃຫ້ອະພັຍ, ແຕ່ ໃນພຣະຄຸນແລະຄວາມເມດຕາພຣະເຈົ້າໄດ້ຍື່ນການໃຫ້ອະພັຍແກ່ເຮົາໂດຍທາງພຣະເຢຊູຄຣິດ. ພວກເຮົາເປັນອິສຣະ!

| |
|---|
| ***ແມ່ນຫຍັງເປັນອຸປສັກກີດກັ້ນເຮົາບໍ່ໃຫ້ອະພັຍຄົນອື່ນ?*** |

**3. <u>ມັດທາຍ18:28,32-33</u>.**

*28 ແຕ່ເມື່ອຂ້າໃຊ້ຜູ້ນັ້ນອອກໄປ ກໍພົບເພື່ອນຜູ້ນຶ່ງທີ່ເປັນຂ້າໃຊ້ດ້ວຍກັນຊຶ່ງເປັນໜີ້ຕົນນຶ່ງຮ້ອຍເດນາຣິອົນ ມັນຈຶ່ງຈັບເພື່ອນຄົນນັ້ນບີບຄໍວ່າ 'ເງິນທີ່ມຶງເປັນໜີ້ກູນັ້ນ ເອົາມາແທນເສັຽແມ'. ເພື່ອນຄົນນັ້ນຈຶ່ງຂາບລົງອ້ອນວອນວ່າ,'ຂໍຜ່ອນຜັນໃຫ້ເຮົາເສັຽກ່ອນຖ້ອນ ແລ້ວເຮົາຈະໃຊ້ໃຫ້ທັງໝົດ'. 32 ທ່ານຈຶ່ງເອີ້ນຂ້າໃຊ້ຜູ້ນັ້ນມາເຝົ້າແລ້ວຊົງກ່າວວ່າ 'ອ້າຍຂີ້ຂ້າຊາດຊົ່ວເອີຍ, ກູໄດ້ຍົກໜີ້ໃຫ້ມຶງທັງໝົດເພາະມຶງໄດ້ອ້ອນວອນຂໍນຳກູ. 33 ມຶງຄວນຈະສົງສານເພື່ອນຂອງມຶງເໝືອນດັ່ງກູໄດ້ສົງສານມຶງ ບໍ່ແມ່ນຫຼື'.*

ເຈົ້າກະສັດໄດ້ປົດປ່ອຍໃຫ້ລູກໜີ້ຄົນນັ້ນເປັນອິສຣະຈາກໜີ້ອັນໃຫຍ່ຫຼວງ. ລາວຖືກປ່ອຍຕົວໃຫ້ແລ່ນໄດ້ຢ່າງເສຣີ, ແຕ່ໜ້າເສົ້າໃຈ, ລາວແລ່ນໄປໃນທາງຜິດ. ລາວແລ່ນໄປທວງໜີ້ຄົນທີ່ຕິດໜີ້ເງິນລາວ. ໜີ້ຜູ້ທີສອງກໍບໍ່ໜ້ອຍ, ແຕ່ກໍບໍ່ສຳຄັນຫຼາຍ ຖ້າທຽບກັບໜີ້ທີ່ຫາກໍ່ໄດ້ຍົກໃຫ້ຜ່ານມາ.

| |
|---|
| ***ການກະທຳຂອງເຈົ້າກະສັດໃນຄຳອຸປມານີ້ເປັນແວ່ນແຍງການກະທຳຂອງພຣະເຈົ້າແກ່ເຮົາຢ່າງໃດ?*** |

ການບັນລະຍາຍຂອງພຣະເຢຊູໄດ້ອອກແບບໃຫ້ເກີດຄວາມໃຈຮ້າຍໃນຫົວໃຈຂອງຜູ້ຟັງ. ພຣະເຢຊູຢາກໃຫ້ເປໂຕແລະຄົນອື່ນໆຖາມໃຈຕົວເອງເບິ່ງວ່າ: "ຄົນນັ້ນເປັນຄົນໂຫດຮ້າຍສ່ຳໃດທີ່ຂູ່ໃຫ້ເພື່ອນຂອງລາວຕ້ອງໃຊ້ໜີ້, ຫຼັງຈາກທີ່ລາວຫາກໍ່ໄດ້ຮັບການອະພັຍມາມື້ກີ້ນີ້?"

ໃນນີ້ມີຄຳຖາມຈິງລຽນເປັນແຖວ. ເປັນຫຍັງເຮົາຈຶ່ງບໍ່ຢາກໃຫ້ອະພັຍໃນເມື່ອເຮົາໄດ້ຮັບການອະພັຍຢ່າງຫຼວງຫຼາຍ,

ແລະໃນເມື່ອເຮົາມີອຳນາດໃຫ້ອະພັຍໄດ້ຢ່າງງ່າຍດາຍ?

ພວກເຮົາອາດຄິດຫາເຫດຜົນຜິດໆຫຼາຍແບບມາຍັບຍັ້ງການໃຫ້ອະພັຍ, ແຕ່ ສາເຫດນຶ່ງທີ່ເຮົາກັກພຣະຄຸນໄວ້ແມ່ນຢາກ "ສອນບົດຮຽນແກ່ຄົນຜິດ". ບາງຄັ້ງເຮົາສົງສັຍວ່າການໃຫ້ອະພັຍອາດເປັນສິ່ງຜິດ. ຖ້າຂ້ອຍໃຫ້ອະພັຍແລະປ່ອຍຄົນຜິດໄປ, ລາວອາດຄິດວ່າການທີ່ເຮົາບໍ່ຖືໂທດຄວາມຜິດຂອງຄົນຜິດອາດເປັນການສົ່ງເສີມໃຫ້ລາວເຮັດຜິດຕໍ່ໄປອີກ. ການປະຕິບັດຄວາມຮັກທີ່ເຄັ່ງຄັດກໍບໍ່ນອກເໜືອກົດເກນ. ຄຣິສຕະຈັກທ້ອງຖິ່ນບາງເທື່ອແລະຮວມກັນເຮັດໃຫ້ຜູ້ເຊື່ອອັບອາຍນາມພຣະເຢຊູຍ້ອນຊີ້ການດຳຣົງຊີວິດຜິດບາບຂອງເຂົາ (1ໂກຣິນໂທ5:9-13). ການໃສ່ວິນັຍຂອງໂບດແມ່ນຕັ້ງຂຶ້ນເພື່ອເປີດຊ່ອງທາງພັກດັນຄົນຜູ້ນັ້ນໃຫ້ມາເຖິງການກັບໃຈແລະປ່ຽນແປງ. ແຕ່ວ່າມັນບໍ່ໄດ້ກີດຂວາງການໃຫ້ອະພັຍ.

ການໃຫ້ອະພັຍບໍ່ແມ່ນເຣື່ອງງ່າຍສເມີ, ແຕ່ເປັນສິ່ງຖືກຕ້ອງສເມີໄປ. ມີແຕ່ຄົນແລ້ງນ້ຳໃຈ, ຄົນໂຫດຮ້າຍເທົ່ານັ້ນທີ່ບັງຂັບໃຫ້ມິດສະຫາຍໃຊ້ໜີ້ເລັກໆນ້ອຍໆໂດຍບໍ່ນຶກເຖິງການຍົກໜີ້ອັນມະຫາສານຂອງຕົນ. ດັ່ງເດັກນ້ອຍກັບພໍ່ໃຈດີ, ພວກເຮົາຕ້ອງຊອກຫາພຣະຄຸນໃຫ້ພົບເພື່ອໃຫ້ອະພັຍ. ພວກເຮົາຢາກໄດ້ຮັບການອະພັຍ...ແລະຕ້ອງການກາຍເປັນຜູ້ໃຫ້ອະພັຍ. ນີ້ມີຄວາມໝາຍຫຼາຍກວ່າການໃຫ້ອະພັຍເທື່ອດຽວ. ພວກເຮົາຕ້ອງສູ້ຊົນໃຫ້ອະພັຍຕໍ່ໄປ ແລະຊຳຣະຜົນຮ້າຍທີ່ຈ່ອງດຶງເຮົາໄວ້ໃຫ້ໝົດສິ້ນ.

ການໃຫ້ອະພັຍຕ້ອງມີການເສັຽສລະນຳ. ຈົ່ງເບິ່ງວ່າ ພຣະເຢຊູເສັຽສລະສໍ່າໃດ. ຮູບພາບ ການໃຫ້ອະພັຍອັນຍິ່ງໃຫຍ່ທີ່ພຣະເຢຊູຮຽກຮ້ອງໃຫ້ເຮົາເຮັດຈະເກີດຂຶ້ນໄດ້ ກໍຕໍ່ເມື່ອເຮົາຖືວ່າເປັນການນະມັສການ. ການໃຫ້ອະພັຍບໍ່ແມ່ນປະຕິກິຣິຍາທາງອາຣົມຕໍ່ຄົນໃດຄົນນຶ່ງ ແຕ່ເປັນການຕອບສນອງອົງພຣະຜູ້ເປັນເຈົ້າທີ່ຮັກຂອງເຮົາ. ພວກເຮົາໃຫ້ອະພັຍເພາະເຫັນແກ່ພຣະອົງ, ເໝືອນດັ່ງການຖວາຍແດ່ພຣະອົງຜູ້ຊົງໃຫ້ອະພັຍເຮົາ.

| |
|---|
| *ທ່ານເຫັນການໃຫ້ອະພັຍເຮັດໃຫ້ຄວາມສັມພັນເລິກເຊິ່ງຫຼືຟື້ນຄວາມສັມພັນຂຶ້ນໃໝ່ຢ່າງໃດ?* |

## ນຳໃຊ້ໃນຊີວິດ

ຈົ່ງອາດພາບເບິ່ງບິນສາມໃບໃນມືທ່ານ. ແຕ່ລະໃບໝາຍເຖິງຜູ້ໃດຜູ້ນຶ່ງເຮັດໃຫ້ທ່ານເຈັບປວດ ແລະເປັນໜີ້ທ່ານ. ທ່ານສາມາດນຳໃຊ້ພຣະຄຸນ, ຄວາມເມດຕາ, ແລະການອະພັຍເຂົ້າໃນສະຖານະການຕ່າງໆຢ່າງໃດ? ຈົ່ງເລືອກເອົາການນຳໃຊ້ອັນນຶ່ງຕໍ່ລົງໄປນີ້:

- **ສຳຫຼວດ.** ຈົ່ງພິຈາຣະນາເບິ່ງຄວາມສັມພັນຂອງທ່ານໃນປະຈຸບັນ ແລະຊອກຫາບ່ອນທີ່ຍັງບໍ່ໄດ້ໃຫ້ອະພັຍໃນໃຈຂອງທ່ານ.
- **ຈົ່ງກ້າວບາດກ້າວນ້ອຍ.** ຈົ່ງພະຍາຍາມຍື່ນການໃຫ້ອະພັຍໃນສາຍສຳພັນບ່ອນທີ່ທ່ານໄດ້ເຮັດຜິດຫຼືໄດ້ຖືເບົາ. ຈົ່ງເລີ້ມເຮັດກ່ອນເຖິງແມ່ນທ່ານບໍ່ໄດ້ເຮັດຜິດກໍຕາມ.
- **ຈົ່ງໂຢບບາດກ້າວກວ້າງ.** ຈົ່ງສັງເກດເບິ່ງຄວາມສັມພັນທີ່ທ່ານຄວນໄດ້ຮັບການອະພັຍ-ບ່ອນໃດບ່ອນນຶ່ງທີ່ທ່ານຮູ້ສຶກເສັຽໃຈແຮງ, ຫຼືສິ່ງທີ່ທ່ານຮູ້ສຶກຜິດຢ່າງຮ້າຍແຮງ, ດ້ວຍຄວາມຖ່ອມໃຈ, ຈົ່ງພຍາຍາມເສື່ອມຕໍ່ບ່ອນຂາດ.

ຄວາມບາບຂອງທ່ານແມ່ນໜີ້10,000ຕາລັນທີ່ພຣະເຈົ້າໄດ້ຍົກໃຫ້. ໜີ້ເລັກນ້ອຍທີ່ຄົນອື່ນຕິດທ່ານບໍ່ສາມາດເອົາມາທຽບໄດ້. ພຣະເຈົ້າໃຫ້ອະພັຍ. ທ່ານກໍສາມາດໃຫ້ອະພັຍໄດ້ເຊັ່ນດຽວກັນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**